# ຮັບວັກຊີນ
# ໂຄວິດ-19 ຫຼ້າສຸດ **2023-2024**

CDC ແນະນຳໃຫ້ຜູ້ທີ່ມີອາຍຸ 6 ເດືອນຂຶ້ນໄປ ໃຫ້ເຂົ້າໄປຮັບວັກຊີນໂຄວິດ-19 ທີ່ໄດ້ອັບເດດຫຼ້າສຸດຂອງປີ 2023–2024. ມີວັກຊີນສາມປະເພດໄວ້ໃຫ້: ໄຟເຊີ, ໂມເດີນນາ ຫຼື ໂນວາແວັກ (ຜູ້ທີ່ມີອາຍຸ 12 ປີຂຶ້ນໄປ) ແລະ ວັກຊີນເຫຼົ່ານັ້ນສາມາດປ້ອງກັນການເຈັບປ່ວຍທີ່ມີອາການຮ້າຍແຮງທີ່ເກີດຈາກໂຄວິດ-19 ໄດ້ເປັນຢ່າງດີ.

ບໍ່ມີວັກຊີນຊະນິດໃດໜຶ່ງດີກວ່າວັກຊີນຊະນິດອື່ນ. ທ່ານຄວນຈະຮັບວັກຊີນທີ່ມີໃຫ້ ແລະ ເໝາະສົມກັບອາຍຸຂອງທ່ານ. ກໍ່ບໍ່ເປັນຫຍັງທີ່ຈະຮັບວັກຊີນຍີ່ຫໍ້ຕ່າງຈາກທີ່ທ່ານໄດ້ຮັບຜ່ານມາ.

| ເດັກນ້ອຍຜູ້ທີ່ມີອາຍຸ 6 ເດືອນ ຫາ 4 ປີ | ອາຍຸ 5 ຫາ 11 ປີ | ອາຍຸ 12 ປີ ຂຶ້ນໄປ | ອາຍຸ 12 ປີ ຂຶ້ນໄປ |
|---|---|---|---|
| ຢ່າງໜ້ອຍ | | ບໍ່ໄດ້ສັກວັກຊີນ | ໄດ້ສັກຢາວັກຊີນແລ້ວ |
| 1<br>ເຂັມວັກຊີນໂຄວິດ-19 ທີ່ໄດ້ອັບເດດຫຼ້າສຸດ<br>(ອາດຈຳເປັນຕ້ອງຮັບຫຼາຍເຂັມເພື່ອໄດ້ຮັບເຂັມທີ່ໄດ້ອັບເດດຫຼ້າສຸດ) | 1<br>ວັກຊີນໂຄວິດ-19 ຫຼ້າສຸດ | 1 ວັກຊີນໄຟເຊີ ຫຼື ໂມເດີນນາໂຄວິດ-19 ທີ່ໄດ້ອັບເດດຫຼ້າສຸດ<br>ຫຼື<br>2 ເຂັມຂອງວັກຊີນໂນວາແວັກໂຄວິດ-19 ທີ່ໄດ້ອັບເດດຫຼ້າສຸດ | 1<br>ວັກຊີນໂຄວິດ-19 ຫຼ້າສຸດ |

ໄວຣັສທີ່ກໍ່ໃຫ້ເກີດໂຄວິດ-19 ແມ່ນມີການປ່ຽນຢູ່ສະເໝີ ແລະ ການປ້ອງກັນຈາກວັກຊີນໂຄວິດ-19 ໃນໄລຍະຜ່ານມາແມ່ນມີຄວາມສາມາດຫຼຸດລົງເມື່ອເວລາຜ່ານໄປ. ການໄດ້ຮັບວັກຊີນໂຄວິດ-19 ສາມາດຊ່ວຍໃຫ້ຟື້ນຟູລະບົບການປ້ອງກັນ ແລະ ໃຫ້ການປ້ອງກັນເພີ່ມຂຶ້ນຈາກໄວຣັສຫຼາກຫຼາຍປະເພດທີ່ມີໃນປັດຈຸບັນ.

**!** ຄົນທີ່ມີບັນຫາພູມຄຸ້ມກັນບົກຜ່ອງໃນລະດັບໃດໜຶ່ງ ຫຼື ຂັ້ນຮຸນແຮງຄວນຈະໄດ້ຮັບວັກຊີນໂຄວິດ-19 ເຂັມກະຕຸ້ນທີ່ໄດ້ອັບເດດຫຼ້າສຸດ. ຂໍໃຫ້ທ່ານປຶກສາກັບຜູ້ໃຫ້ບໍລິການສຸຂະພາບຂອງທ່ານ.

ຂໍໃຫ້ທ່ານປຶກສາກັບຜູ້ໃຫ້ບໍລິການສຸຂະພາບຂອງທ່ານ ຖ້າທ່ານມີຄຳຖາມກ່ຽວກັບວັກຊີນໂຄວິດ-19 ຫຼ້າສຸດ2023–2024 ຫຼື ເຂົ້າເບິ່ງ ກ່ຽວກັບວັກຊີນໂຄວິດ-19 (www.health.mn.gov/diseases/coronavirus/vaccine/basics.html) ຫຼື CDC: ໃຫ້ຕິດຕາມຂ່າວສານຫລ້າສຸດກ່ຽວກັບວັກຊີນໂຄວິດ-19 (www.cdc.gov/coronavirus/2019–ncov/vaccines/stay-up-to-date.html) ສຳລັບຂໍ້ມູນເພີ່ມເຕີມ

Minnesota Department of Health | health.mn.gov | 651–201–5000 | 625 Robert Street North PO Box 64975, St. Paul, MN 55164–651 ຕິດຕໍ່ health.communications@state.mn.us ເພື່ອສະເໜີຂໍໃນຮູບແບບອື່ນ.

01/02/2024

MINNESOTA